ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 12/ຫກ
ນະຄອນຫຼວງວຽງຈັນ, ວັນທີ: 21 ເມສາ 2017

ສຳນັກງານ ຄຄຊ
ເລກທີ.........
ວັນທີ 25 APR 2017
ໂທລະສັບ 021 217770

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 27-31/03/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,21% ທຽບເອີໂຣ ເນື່ອງຈາກຕົວເລກດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນເປັນ 125,6 ຈຸດ ໃນເດືອນ 3/2017 ຈາກ 116,1 ຈຸດ ໃນເດືອນ 2/2017.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 20-24/03/2017 | ອາທິດນີ້ 27-31/03/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0799 | 1,0670 | 1,21% |
| ໂດລາ/ເຢນ | 111,10 | 111,93 | -0,74% |
| ໂດລາ/ບາດ | 34,65 | 34,36 | 0,84% |
| ໂດລາ/ເປໂຊ | 50,24 | 50,32 | -0,16% |
| ໂດລາ/ຣູເປັຍ | 13.326 | 13.323 | 0,02% |
| ໂດລາ/ໂດລາສິງກະໂປ | 1,3987 | 1,3972 | 0,11% |
| ໂດລາ/ຢວນ | 6,8857 | 6,8912 | -0,08% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 1,88% ຈາກ 49,36 ມາເປັນ 50,29 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນຂອງສະຫະລັດອາເມລິກາເພີ່ມຂຶ້ນ ຊຶ່ງເຫັນໄດ້ຄັງສຳຮອງນ້ຳມັນຂອງສະຫະລັດອາເມລິກາ ຫຼຸດລົງຈາກ 2,81 ລ້ານບາເຣວ ມາເປັນ 3,74 ລ້ານບາເຣວໃນອາທິດຜ່ານມາ.

- ສ່ວນລາຄາຄຳ ຫຼຸດລົງ 0,19% ຈາກ 1.244,10 ໂດລາ/ອອນ ມາເປັນ 1.241,74 ໂດລາ/ອອນ ເນື່ອງຈາກ ກອງທຶນທີ່ຖືຄອງຄຳທີ່ໃຫຍ່ທີ່ສຸດຂອງໂລກ (SPDR) ໄດ້ຫຼຸດຜ່ອນການຖືຄອງຄຳລົງ 2,08 ໂຕນ ໃນວັນທີ 21/3/2017 ຈາກ 834,40 ໂຕນ ມາເປັນ 832,32 ໂຕນ ໃນວັນທີ 30/3/2017.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ແລະ ອ່ອນຄ່າ 0,71% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 1,98% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 5,13% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 20-24/03/2017 | | | ອາທິດນີ້ 27-31/03/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.315,65 | 8.365,22 | 8.339,22 | 8.327,65 | 8.361,40 | 8.342,63 | -0,15% | 0,05% | -0,04% | -2.12% | -1.84% | -1.98% |
| ບາດ | 238,44 | 239,70 | 239,24 | 240,55 | 241,27 | 240,96 | -0,88% | -0,65% | -0,71% | -5.35% | -5.10% | -5.13% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,29% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,49%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,32% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,96%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (24-30/03/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 29,66 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 57,02 ລ້ານໂດລາ ແລະ ຂາຍໂດລາໄດ້ 27,36 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.334,77 ລ້ານບາດ (ໃນນີ້ ຊື້ບາດໄດ້ 403,83 ລ້ານບາດ ແລະ ຂາຍບາດໄດ້ 1.738,60 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 22,52% ແລະເງິນບາດເພີ່ມຂຶ້ນ 56,18%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 3,65 ລ້ານໂດລາ ແລະເງິນບາດສຸດທິ ຈຳນວນ 7 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,53 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 127,58 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 17-23/3/2017 | | ອາທິດທີ 24-30/3/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **45,39** | **177,64** | **57,02** | **403,83** | **25,62%** | **127,33%** |
| - ທ/ຄທຸລະກິດລັດ | 13,40 | 46,99 | 15,85 | 83,43 | 18,28% | 77,55% |
| - ທ/ຄທຸລະກິດອື່ນໆ | 31,99 | 130,65 | 41,17 | 320,40 | 28,70% | 145,24% |
| **2. ການຂາຍເງິນຕາຕ່າງປະເທດ** | **23,48** | **1.194,13** | **27,36** | **1.738,60** | **16,52%** | **45,60%** |
| - ທ/ຄທຸລະກິດລັດ | 11,62 | 143,92 | 13,80 | 289,91 | 18,76% | 101,44% |
| - ທ/ຄທຸລະກິດອື່ນໆ | 11,86 | 1.050,21 | 13,56 | 1.448,69 | 14,33% | 37,94% |
| **ຊື້-ຂາຍສຸດທິ ທທກ** | **21,91** | **-1.016,49** | **29,66** | **-1.334,77** | **35,37%** | **31,31%** |
| - ຜິດດ່ຽງ ຊື້-ຂາຍ | 48,27% | -572,22% | 52,02% | -330,53% | 7,76% | -42,24% |
| - ມູນຄ່າການຊື້-ຂາຍ | **68,87** | **1.371,77** | **84,38** | **2.142,43** | **22,52%** | **56,18%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-2,40** | **-13,00** | **-3,65** | **-7,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 2,40 | 13,00 | 3,65 | 7,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **2,30** | **106,35** | **4,53** | **127,58** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **-15,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 15,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 03/2017 ຢູ່ໃນລະດັບ 1,75% ເພີ່ມຂຶ້ນຈາກ 1,67% ໃນເດືອນ 02/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ເພີ່ມຂຶ້ນ 2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 53,23 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 905 ສະບັບ ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 16 ສະບັບ ເທົ່າກັບ 1,79% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 602,21 ຕື້ກີບ ເພີ່ມຂຶ້ນ 245,93 ຕື້ກີບ ເທົ່າກັບ 69,02% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (24-30/3/2017) ມີທັງໝົດ 3.162 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.094 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ 195,29 ຕື້ກີບ ຈາກ 819,78 ມາເປັນ 1.015,07 ຕື້ກີບ ເທົ່າກັບ 23,82%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 68 ຄັ້ງ, ມູນຄ່າການໂອນ 185,60 ຕື້ກີບ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.088,93 ຈຸດ ຫຼຸດລົງ 1,53% ເມື່ອທຽບໃສ່ອາທິດຜ່ານມາ, ມີປະລິມານຊື້-ຂາຍຮຸ້ນທັງໝົດ 462.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,43 ຕື້ກີບ ເພີ່ມຂຶ້ນ 76,48% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 51,19% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ **20-24/03/2017** | ດັດຊະນີອາທິດທີ **27-31/3/2017** | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.105,95 | 1.088,93 | -1,53% | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 173.600 | 958.315.000 | 5.520 | 266.100 | 1.466.035.000 | 5.509 | 53,28 | 52,98 | -11 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 66.900 | 359.755.000 | 5.378 | 178.100 | 929.525.000 | 5.219 | 166,22 | 158,38 | -158 |
| ບໍລິສັດລາວເວີນ ມະຫາຊົນ | 0 | 0 | 9.100 | - | - | 9.100 | - | - | - |
| ບໍລິສັດປີໂຕລ້ຽມ ເທຣດ ດິ້ງລາວ ມະຫາຊົນ | 29.400 | 58.940.000 | 2.300 | 18.200 | 34.640.000 | 1.903 | -38,10 | -41,23 | -397 |
| ບໍລິສັດສູວັນນີ ໂຮມເຊັນເຕີ ມະຫາຊົນ | 0 | 0 | 3.100 | - | - | 3.100 | - | - | - |
| ທັງໝົດ | 269.900 | 1.377.010.000 | 5.102 | 462.400 | 2.430.200.000 | 5.256 | 71,32 | 76,48 | |

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- **ສຳເລັດຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມເປີດກວ້າງກ່ຽວກັບຮ່າງກົດໝາຍວ່າດ້ວຍລະບົບຊຳລະ ຢູ່ (ທຫລ); ❷ ກອງປະຊຸມກ່ຽວກັບວຽກງານກວດກາ ທຫລ ປະຈຳປີ 2016; ❸ ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຄັ້ງທີ I ປະຈຳປີ 2017 ຢູ່ (ທຫລ); ❹ ກອງປະຊຸມປຶກສາຫາລືກ່ຽວກັບການຊ່ວຍເຫຼືອທາງດ້ານວິຊາການຂອງທະນາຄານໂລກ ໃນວັນທີ 28 ເມສາ 2017;
- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບການເປີດເຜີຍຂໍ້ມູນປະຈຳໄຕມາດ 1 ປີ 2017 ຂອງບໍລິສັດລາວເວີນ ມະຫາຊົນ; ❷ ກອງປະຊຸມ " ການບໍລິຫານໜີ້ສາທາລະນະ ໃນພາກພື້ນອາຊີ ປະຈຳປີ 2017" ທີ່ຊຽມລຽບ, ປະເທດກຳປູເຈຍ;
- ສຳເລັດການລົງກວດກາທະນາຄານພົງສະຫວັນ ແລະ ທະນາຄານເອຊີລີດາ ປະຈຳປີ 2016;

- ສຳເລັດການເຂົ້າຮ່ວມພິທີສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານທອງດຳນຄົບຮອບ 5 ປີ ທີ່ (ໂຮງແຮມເມືອງແທ້ງ);
- ສຳເລັດການອອກແຈ້ງການເຖິງພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດກ່ຽວກັບການເພີ່ມທະວີສະຕິລະວັງຕົວຕໍ່ກັບການນຳໃຊ້ບໍລິການຝາກເງິນ ແລະ ການຮ່ວມລົງທຶນກັບບໍລິສັດຫຼືສະຖາບັນການເງິນທີ່ໃຫ້ຜົນຕອບແທນສູງ;
- ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງ ທ່ານ ເອກອັກຄະລັດຖະທູດ ແຫ່ງ ສ. ກູບາ ປະຈຳ ສປປ ລາວ ແລະ ຜູ້ອຳນວຍການທະນາຄານຫຸ້ນສ່ວນການຄ້າທະຫານຫວຽດນາມ ສາຂາ ຢູ່ລາວ.

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ຄະນະສືບຕໍ່ລົງຕິດຕາມການປະຕິບັດມາດຕະການຊົ່ວຄາວ ທີ່ ທະນາຄານ ພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ;
- ສືບຕໍ່ຕິດຕາມການເຄື່ອນໄຫວຂອງບໍລິສັດ ພີເອັສ ແລະ ບໍລິສັດອາຊຽນເຟສ ທີ່ເຄື່ອນໄຫວນອກວັດຖຸປະສົງ;
- ສືບຕໍ່ລົງກວດກາສະຖາບັນການເງິນທີ່ບໍ່ຮັບເງິນຝາກ ແລະ ສະຖາບັນການເງິນຮັບເງິນຝາກ ປະຈຳປີ 2016;
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມນາຍົກ ແລະ ຮອງນາຍົກລັດຖະມົນຕີ ປະຈາເດືອນ ເມສາ 2017 ຢູ່ (ຫສນຍ); ❷ ກອງປະຊຸມສ່ອງແສງສາຍພັກ-ລັດ ປະຈຳເດືອນ ມີນາ 2017 ຢູ່ (ທຫລ); ❸ ກອງປະຊຸມສະພາບໍລິຫານທະນາຄານນະໂຍບາຍ ສະໄໝສາມັນ ຄັ້ງທີ I ປະຈຳປີ 2017 ຢູ່ ທນບ; ❹ ກອງປະຊຸມຮ່ວມລັດຖະມົນຕີການເງິນ, ຜູ້ວ່າການທະນາຄານກາງອາຊຽນ ແລະ ກອງປະຊຸມກ່ຽວຂ້ອງອື່ນໆ ຢູ່ ປະເທດຟີລິບປິນ;
- ສືບຕໍ່ອອກແຈ້ງການເຖິງສາຂາທະນາຄານແຫ່ງ ສປປ ລາວ ປະຈຳແຕ່ລະພາກ ໃຫ້ຕິດຕາມບັນຫາທີ່ຕິດພັນກັບວຽກງານທະນາຄານ ເພື່ອກະກຽມລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ;
- ສືບຕໍ່ອອກແຈ້ງການເຖິງອຳນາດການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງຕ່າງໆ ໃນຂອບເຂດທົ່ວປະເທດ ເພີ່ມທະວີວຽກງານສຶກສາອົບຮົມໃຫ້ກັບປະຊາຊົນ ໃຫ້ມີສະຕິໃນການບໍລິການຝາກເງິນ ແລະ ຮ່ວມລົງທຶນກັບບັນດາບໍລິສັດຫຼືສະຖາບັນການເງິນທີ່ໃຫ້ຜົນຕອບແທນສູງ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ